**ສຳພາດ**

# ການສອນຄວາມສຸກ (Teaching happiness)

**ສົມບັດ ສົມພອນ ນັກວິຊາການ ຢາກໃຫ້ທົບທວນລະບົບການສຶກສາ ໂດຍຟັງຄວາມເຫັນຈາກຜູ້ຮຽນ ໃນຂະນະທີ່ປະເທດຕ່າງໆ ໃນອາຊຽນກຽມຕົວເຂົ້າເປັນປະຊາຄົມໃນປີ ຄສ 2015**

*Bangkok Post: 24 ສິງຫາ 2012*

ນັກວິຊາການດັ່ງ ທ່ານ ສົມບັດ ສົມພອນບໍ່ເຄີຍທໍ້ຖອຍທີ່ຈະສະແດງຄວາມເຫັນໃນປະເດັນເພິ່ນຮັກທີ່ສຸດ ໂດຍສະເພາະຄວາມຈຳເປັນທີ່ອາຊຽນຕ້ອງມຸ່ງໜ້າເນັ້ນການສຶກສາແບບຍືນຍົງ ເພື່ອກຽມຮັບມືກັບການເປັນປະຊາຄົມເສດຖະກິດອາຊຽນໃນປີ ພສ 2558



ຜູ້ຮັບລ້າງວັນຣາມອນແມັກໄຊໄຊ-ສາຂາຜູ້ນຳຊຸມຊົນປະຈຳປີ ພສ 2548 ເຊິ່ງເກີດໃນລາວທ່ານນີ້ ໃນປະຈຸປັນເປັນຜູ້ອຳນວຍການສູນອົບຮົມຮ່ວມພັດທະນາ (Participatory Development Training Centre - PADETC) ໃນນະຄອນຫຼວງວຽງຈັນ

ເພິ່ນຮຽນຈົບດ້ານການສຶກສາ ແລະດ້ານການກະເສດຈາກມະຫາວິທະຍາໄລຮາວາຍ ເເລະຜົນສຳເລັດຈົນເຖິງປັດຈຸບັນຂອງ ສົມບັດ ສ່ວນໃຫຍ່ກ່ຽວຂ້ອງກັບການພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ລວມທັງໂຄງການກະເສດແບບປະສົມປະສານ ພ້ອມກັບການປູກເຂົ້າຊ່ວຍເຫຼືອຊາວນາໃນທ້ອງຖິ່ນ ໃຫ້ມີຄວາມໝັ້ນຄົງດ້ານອາຫານ, ການກໍ່ຕັ້ງສູນອົບຮົມເພື່ອການພັດທານາຢ່າງມີສ່ວນຮ່ວມ ເຊິ່ງເປັນຕົ້ນແບບຂອງໜ່ວຍງານບໍ່ສະແຫວງຫາຜົນກຳໄລທີ່ພາຍາຍາມສົ່ງເສີມການພັດທະນາແບບຍືນຍົງແສະເພິ່ງພາຕົນເອງໃນ ສປປ ລາວ

ຈາກການເຮັດວຽກໄດ້ເຮັດໃຫ້ນັກສຶກສາຜູ້ທີ່ເວົ້າຈາຢ່າງນອບນ້ອມຖ່ອມຕົນທ່ານນີ້ຕ້ອງມາຮ່ວມງານໃນໂຄງການປັນຍາຊົນສາທາລະນະແຫ່ງອາຊຽນໃນໂອກາດປິດໂຄງການພູມມິພາກ (Asian Public Intellectuals Regional Project Culminating Event) ຊຶ່ງຈັດຂຶ້ນທີ່ກຸງເທບ

ເພິ່ນເວົ້າໄດ້ຢ່າງກົນໃຈກ່ຽວກັບທິດທາງການສຶກສາທີ່ຈະຕ້ອງໃຊ້ປະໂຫຍດຈາກການລວມກັນເປັນປະຊາຄົມຂອງອາຊຽນໃນອີກສາມປີ

*"ຜູ້ນຳອາຊຽນຕ້ອງເນັ້ນການປັບປຸງການສຶກສາໃນພາກພື້ນເພື່ອສົ່ງເສີມໃຫ້ເກີດປະຊາຄົມທີ່ມີພະລັງສ້າງສັນ"*

*"ແນວໃດກໍດີ ເສັ້ນທາງໄປສູ່ຄວາມສຳເລັດດັ່ງກ່າວອາດບໍ່ສົດໃສປານໃດ ຫາກພິຈາລະນາຈາກເຈດຈຳນົງທາງການເມືອງຂອງຜູ້ນຳອາຊຽນທີ່ເປັນຢູ່ ຊຶ່ງມັກສົນໃຈແບບແຜນການພັດທະນາທີ່ບໍ່ຍືນຍົງ ແລະ ພຶ່ງພາກັບການຂະຫຍາຍຕົວທາງເສດທະກິດ" ເພິ່ນກ່າວໄວ້ "ພວກເຂົາຍັງບໍ່ເຫັນຄວາມສຳຄັນເຖິງຄວາມຈຳເປັນທີ່ຈະຕ້ອງສະແຫວງຫາແນວທາງໃໝ່ໆ ດ້ານການສຶກສາ ຊຶ່ງອາດແຕກຕ່າງຈາກແນວທາງທີ່ພວກເຂົາຄຸ້ນເຄີຍ"*

*"ນອກຈາກຈະເກີດວິກິດໃຫຍ່ໆ ປະຊາຊົນມັກບໍ່ເຫັນຄວາມສຳຄັນວ່າພວກເຮົາຕ້ອງຮື້ລະບົບການສຶກສາທັງໝົດ ໃນປັດຈຸບັນເຊື່ອງຊ້າເກີນໄປ ແລະ ຍຶດຕິດກັບປະເພນີເກົ່າ ການສຶກສາບໍ່ຄວນມຸ່ງເນັ້ນສະເພາະດ້ານວິຊາການ"*

*"ເຮົາຕ້ອງໃຫ້ຄວາມສຳຄັນເລື່ອງພອນສະຫວັນ ແລະ ຄວາມສາມາດທີ່ແຕກຕ່າງກັນຂອງຜູ້ຮຽນແຕ່ລະຄົນ ທຸກຄົນຕ່າງມີຄວາມສາມາດ ພຽງແຕ່ສະຖານການສຶກສາບໍ່ໄດ້ໃຊ້ປະໂຫຍດຈາກຄວາມແຕກຕ່າງທີ່ມີຢູ່ໃນບັນດາຜູ້ຮຽນເຫຼົ່ານີ້ ເຮົາຄວນເປີດໂອກາດໃຫ້ແຕ່ລະບຸກຄົນໄດ້ພັດທະນາພອນສະຫວັນ ແລະ ຄວາມສາມາດຂອງຕົນຢ່າງເຕັມທີ່ ເຊິ່ງສາມາດເຮັດໄດ້ບໍ່ວ່າຢູ່ໃນຊ່ວງໄວອາຍຸໃດ ແຕ່ໂຊກຮ້າຍທີ່ພວກເຮົາບໍ່ໄດ້ຮັບການສອນໃຫ້ຕຶກຕອງພິຈາລະນາຕົນເອງຈາກພາຍໃນ ທັ້ງໆທີ່ເປັນຂັ້ນຕອນສຳຄັນແລະຄວນຖືກເອົາໃຈໃສ ຍິ່ງຜູ້ຮຽນມີອາຍຸນ້ອຍເທົ່າໃດ ກໍຍິ່ງຈະງາຍທີ່ຈະຊ່ວຍໃຫ້ພວກເຂົາຄົ້ນພົບແລະພັດທະນາພອນສະຫວັນ ແລະທັກສະທີ່ມີຢູ່ໃນຕົວພວກເຂົາເອງຢູ່ແລ້ວ"*

ສົມບັດສະໜັບສະໜູນໃຫ້ໄວໜຸ່ມໄດ້ມີສ່ວນຮ່ວມໃນການກຳນົດທິດທາງການສຶກສາ ເພິ່ນເຫັນວ່າເປັນເລື່ອງສຳຄັນຫຼາຍທີ່ຈະຕ້ອງໃຫ້ໄວໜຸ່ມໄດ້ສະແດງຄວາມຄິດເຫັນ ເພາະພວກເຂົາເປັນອານາຄົດຂອງປະເທດຊາດ ແລະມີສິດທີ່ຈະສະແດງຄວາມຄິດໂດຍຜ່ານຊ່ອງທາງຕ່າງໆ ບໍ່ວ່າຈະເປັນເຄືອຄ່າຍສັງຄົມອອນລາຍ ແລະ ໂທລະພາບ ສ່ວນຜູ້ມີອຳນາດກໍມີໜ້າທີ່ຕ້ອງຮັບຟັງສຽງເຫຼົ່ານີ້

ນັກຮຽນນັກສຶກສາປັດຈຸບັນຄວນໄດ້ຮັບການສະໜັບສະໜູນແລະສົ່ງເສີມໃຫແລກປ່ຽນຄວາມຄິດເຫັນກັນ, ຜູ້ຮັບລາງວັນ ແມັກໄຊໄຊ ກ່າວໄວ້, ທີ່ຜ່ານມາເພິ່ນໄດ້ພັດທະນາຫຼັກສູດການຮຽນການສອນທີ່ມີເດັກເປັນໃຈກາງແບບໃໝ່ສຳລັບໂຮງຮຽນປະຖົມໃນລາວ ໃນຖານະນັກການສຶກສາຜູ້ເຕັມໄປດ້ວຍປະສົບການ ສົມບັດໄດ້ກ່າວໄວ້ວ່າເວທີລະດັບພູມິພາກຢ່າງເຊັ່ນ ກອງປະຊຸມສຸດຍອດເອເຊຍ ຍູໂຣບຄັ້ງທີ່ 9 ຊຶ່ງຈະຈັດຂຶ້ນໃນລາວໃນຊ່ວງທ້າຍປີນີ້ ເປັນເວທີສາມາດໃຊ້ເພື່ອກວດສອບຄວາມເຫັນໄວໜຸ່ມໃນ

ປັດຈຸບັນ ແລະທຳຄວາມເຂົ້າໃຈວ່າພວກເຂົາຕ້ອງການລະບົບສຶກສາແບບໃດ ໃນຊ່ວງກຽມຕົວກ່ອນຈັດປະຊຸມມີການຈັດການປຶກສາຫາລືກັບປະຊາຊົນຝໃນບັນດາແຂວງຕ່າງໆ ໃນລາວເພື່ອຮວບລວມຄວາມເຫັນຈາກຫຼາຍພາກສ່ວນໃນສັງຄົມ ໂດຍສະເພາະຈາກໄວໜຸ່ມໃນເງ່ມຸມທີ່ພວກເຂົາຕ້ອງການວາງແຜນອານາຄົດຂອງຕົນເອງແນວໃດ ເພິ່ນຫວັງວ່າປະເທດອື່ນໆ ຈະປະຕິບັດເຊັ່ນດຽວກັນ

ທ່ານສົມບັດ ມີມຸມມອງວ່າເຮົາຄວນປູກຝັງຄວາມຮູ້ພູມປັນຍາທ້ອງຖິ່ນຕັ້ງແຕ່ເດັກຍັງນ້ອຍໆ ຢູ່ຈາກການສຶກສາໃນປະເດັນນີ້ ເພິ່ນກ່າວວ່າເດັກສາມາດຮຽນຮູ້ພາສາຕ່າງໆໄດ້ຫຼາຍກວ່າແປດພາສາໃນເວລາດຽວກັນກ່ອນຈະເຖິງໄວຈະເລີນພັນ

ແຕ່ໂຊກຮ້າຍທີ່ລະບົບການສຶກສາປັດຈຸບັນບໍ່ເປີດໂອກາດໃຫ້ເດັກຮຽນພາສາຕ່າງປະເທດຈົນກວ່າພວກເຂົາອາຍຸໄດ້ 12 ປີ ເຊິ່ງຖືວ່າເປັນແນວທາງສຶກສາທີ່ບໍ່ສອດຄ່ອງກັບພັດທະນາການສະໝອງ

ເພິ່ນກ່າວໄວ້ວ່າ ເປັນເລື່ອງທີ່ໜ້າເສຍດາຍທີ່ພໍ່ແມ່ສ່ວນໃຫຍ່ປ່ອຍໃຫ້ພາລະການສຶກສາເປັນຂອງໂຮງຮຽນ ແລະປ່ອຍໃຫ້ເລື່ອງການພັດທະນາເປັນຂອງນັກວາງແຜນ ແລະຕໍ່ມາຕ້ອງແປກໃຈວ່າຜູ້ຮຽນທີ່ເປັນຜົນຜະລິດຈາກສະຖາບັນການສຶກສາເຊັ່ນນີ້ມັກບໍ່ສາມາດເຊື່ອມໂຍງສິ່ງທີ່ຮຽນຮູ້ກັບການໃຊ້ຊີວິດຕົວຈິງໄດ້. ສົມບັດກ່າວໄວ້ວ່ານັກການສຶກສາຄວນເນັ້ນຄວາມເຊື່ອມໂຍງລະຫວ່າງເສດຖະກິດ ຄວາມງອກງາມທາງຈິດວິນຍານ, ທຳມະຊາດ, ແລະ ສັງຄົມ ຊຶ່ງລ້ວນເປັນພື້ນຖານຂອງຄວາມຍືນຍົງ ແລະຄວາມສຸກ. ເພິ່ນໄດ້ເວົ້າຕື່ມວ່າການດຳລົງຊີວິດ ແລະການສຶກສາຮຽນຮູ້ຂອງບຸກຄົນແລະຄອບຄົວ ເປັນປັດໃຈກຳນົດອານາຄົດຂອງບຸກຄົນທີ່ເຮົາຮັກ

*“ລະບົບການສຶກສາຂອງເຮົາລົ້ມເຫຼວໃນການເຮັດໜ້າທີ່ນີ້ ແລະຄວນເຂົ້າຮັບການສອບສວນຄະດີໃນອາຍາ” ຜູ້ນຳຊຸມຊົນກ່າວໄວ້ຢ່າງຕະຫຼົກ “ແມ່ແບບການສຶກສາແລະພັດທະນາທີ່ຍືນຍົງຄວນມີຄວາມສົມດຸນລະຫວ່າງຫຼັກສີ່ປະການ ໄດ່ແກ່ ການພັດທະນາດ້ານເສດທະກິດໃຫ້ມີຄວາມສອດຄ້ອງກັບດ້ານສິ່ງແວດລ້ອມ ການສົ່ງເສີມແລະອານຸລັດວັດທະນາທຳ ແລະຄວາມງອກງາມທາງດ້ານຈິດວິນຍານ"*

*“ແມ່ແບບການພັດທະນາທີ່ຂ້າພະເຈົ້າສະເໜີນີ້ ໄດ້ລິເລີ່ມມາຈາກປະເທດບູຖານ"*

ເປົ້າໝາຍການພັດທະນາບໍ່ຄວນມຸ່ງເນັ້ນສະເພາະການເຕີບໃຫຍ່ຂອງລາຍໄດ້ຂອງປະຊາຊາດ (GNP) ແຕ່ຄວນໃຫ້ຄວາມສຳຄັນກັບຊີວິດການເປັນຢູ່ທີ່ດີຂຶ້ນຂອງປະຊາຊົນ ຫຼືທີ່ເອີ້ນກັນວ່າເປັນຄວາມສຸກລວມຍອດຂອງປະຊາຊາດຊາດ (Gross National Happiness - GNH) ໃນແມ່ແບບດັ່ງກ່າວການສຶກສາຖືເປັນພື້ນຖານອັນສຳຄັນ

*“ເສົາຫຼັກທີ່ກ່າວທັງສີ່ປະການນັ້ນ ສະທ້ອນຫຼາຍມິຕິຂອງການພັດທະນາ ແລະ ໂຄງສ້າງພື້ນຖານຂອງຂະບວນການສຶກສາ ແລະການພັດທະນາທີ່ສອດຄ່ອງກັບສິ່ງແວດລ້ອມແລະເປັນອົງລວມມີຄວາມເຊື່ອມໂຍງເຖິງກັນ ມີຄວາມສຳພັນຕໍ່ກັນແລະເກື້ອກູນຊຶ່ງກັນແລະກັນ“*

*“ແນ່ນອນວ່າສິ່ງທີ່ເປັນພື້ນຖານຂອງແມ່ແບບເລົ່ານີ້ຄື ທັມມາພິບານ ເຊິ່ງຈະສົ່ງເສີມຄວາມຍຸດຕິທຳແລະຄວາມເປັນທຳສຳລັບທຸກຄົນໂດຍຜ່ານຫຼັກນິຕິທຳ“*